## II. ລາຍງານການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບລາວ (ປະຈຳໄຕມາດ IV ປີ 2015)

### 1. ສະພາບການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບໃນຕ່າງປະເທດ

ດັດຊະນີຕະຫຼາດຫຼັກຊັບຕ່າງປະເທດໃນໄຕມາດທີ່ຜ່ານມາທຽບກັບໄຕມາດນີ້ ມີລາຍລະອຽດ ດັ່ງລຸ່ມນີ້:

**ດັດຊະນີຕະຫຼາດຫຼັກຊັບໃນ ສ.ອາເມລິກາ**: ດັດຊະນີ Dow Jones ປັບຕົວເພີ່ມຂຶ້ນ 4,49%, S&P500 2,75% ແລະ NASDAQ 2,9%. ສາເຫດທີ່ພາໃຫ້ດັດຊະນີຕະຫຼາດຫຼັກຊັບໃນ ສ.ອາເມລິກາ ປັບຕົວເພີ່ມຂຶ້ນເນື່ອງຈາກ ລາຍງານຜົນການດຳເນີນງານລ່າສຸດຂອງຫຼາຍບໍລິສັດໃນ ສ.ອາເມລິກາ ທະນາຄານກາງ ສ.ອາມລິກາ ຫຼື FED ອອກມາລາຍງ່ນວ່າ ຄວາມເຂັ້ມແຂງຂອງເສດຖະກິດປະເທດມີຄວາມເຂັ້ມແຂງພໍທີ່ຈະສາມາດຮັບມືກັບການຂຶ້ນດອກເບ້ຍເງິນກູ້ໄດ້ ຈາກປັດໃຈດັ່ງກ່າວຈຶ່ງສົ່ງຜົນໃຫ້ດັດສະນີຕະຫຼາດຫຼັກຊັບ ສ.ອາເມລິກາ ໃນໄຕມາດນີ້ປັບຕົວເພີ່ມຂຶ້ນເມື່ອທຽບກັບໄຕມາດກ່ອນ.

**ດັດຊະນີຕະຫຼາດຫຼັກຊັບໃນເອີຣົບ**: ດັດຊະນີ ເອີຣົບ (Eurofirst 300) ປັບຕົວຫຼຸດລົງ -0,67%, ຝຣັ່ງ (CAC40) -0,44%, ລຸກຊຳບວກ (LUXXX) -5,57% ແລະ ອັງກິດ (FTSE100) -1,21% ຍົກເວັ້ນ ເຢຍລະມັນ (DAX) ປັບຕົວເພີ່ມຂຶ້ນ 5,52% ສາເຫດທີ່ພາໃຫ້ດັດຊະນີຕະຫຼາດຫຼັກຊັບໃນເອີຣົບ ປັບຕົວຫຼຸດລົງ ເນື່ອງຈາກ ການປະຊຸມທະນາຄານກາງເອີຣົບ ໄດ້ປະກາດປັບຫຼຸດຕົວເລກຄາດການການຂະຫຍາຍຕົວຂອງເສດຖະກິດ 19 ປະເທດ ໃນຂົງເຂດເອີຣົບໃນປີນີ້ ຈາກ 1,5% ເຫຼືອ 1,4% ຈາກປັດໃຈດັ່ງກ່າວຈຶ່ງສົ່ງຜົນໃຫ້ດັດສະນີຕະຫຼາດຫຼັກຊັບ ເອີຣົບ ໃນໄຕມາດນີ້ປັບຕົວຫຼຸດລົງເມື່ອທຽບກັບໄຕມາດກ່ອນ.

**ດັດຊະນີຕະຫຼາດຫຼັກຊັບໃນອາຊີ**: ດັດຊະນີ ອາຊຽນ (ASEAN 40) ປັບຕົວຫຼຸດລົງ -0,98%, ໄຕ້ຫວັນ (TWSE) -0,3%, ສິງກະໂປ (STRAIT TIMES) -1,27%, %, ມາເລເຊຍ (FBMLCI) -0,63%, ຟີລິບປິນ (PCOMP) -2,57%, ຕະຫຼາດຫຼັກຊັບ ໄທ (SET) ປັບຕົວຫຼຸດລົງ -9,21%, ສສ. ຫວຽດນາມ (HOCHIMIN) -0,91% ແລະ ກຳປູເຈຍ (CSX) -6% ຍົກເວັ້ນ ຕະຫຼາດຫຼັກຊັບ ອົດສະຕາລີ (S&P/ASX200) ປັບຕົວເພີ່ມຂຶ້ນ 0,84%, ອິນໂດເນເຊຍ (JCI) 2,62%, ຍີ່ປຸ່ນ (NIKKEI225) 4,68%, ສ.ເກົາຫຼີ (KOSPI) 0,84%, ຮ່ອງກົງ (HANG SENG) 0,16%, ສປ.ຈີນ (SHANGHAI) 15,39%, ສປ.ຈີນ (SHENZHEN) 35,62% ແລະ ສສ. ຫວຽດນາມ (HANOI) 0,83%. ສາເຫດທີ່ພາໃຫ້ດັດຊະນີຕະຫຼາດຫຼັກຊັບໃນອາຊີປັບຕົວຫຼຸດລົງ ເນື່ອງຈາກ ຜູ່ລົງທຶນມີຄວາມກັງວົນຕໍ່ກັບເສດຖະກິດຂອງ ສປ. ຈີນ ເນື່ອງຈາກດັດສະນີ PMI ຂອງສ.ປ ຈີນ ປັບຕົວຫຼຸດລົງຢູ່ທີ່ລະດັບ 47,3 ໃນເດືອນ ສິງຫາ ຈາກ 47,8 ໃນເດືອນ ກໍລະກົດ ເຊິ່ງເປັນການປັບຕົວຫຼຸດລົງເປັນເດືອນທີ 6 ຕິດຕໍ່ກັນ ແລະ ຂ່າວການເຂົ້າກວດສອບບໍລິສັດຫຼັກຊັບ ຊິດຕີ້ ຊີຄຽວລີຕີ້ ເຊິ່ງເປັນບໍລິສັດຫຼັກຊັບອັນດັບ 1 ຂອງ ສປ. ຈີນ ໂດຍຄະນະກຳມະການຄຸ້ມຄອງຫຼັກຊັບຈີນ ຈາກປັດໃຈດັ່ງກ່າວຈຶ່ງສົ່ງຜົນໃຫ້ດັດສະນີຕະຫຼາດຫຼັກຊັບໃນ ອາຊີ ໃນໄຕມາດນີ້ປັບຕົວຫຼຸດລົງເມື່ອທຽບກັບໄຕມາດກ່ອນ.

## II. ສະພາບການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບລາວ

ດັດຊະນີຕະຫຼາດຫຼັກຊັບລາວ ໃນໄຕມາດນີ້ປິດຢູ່ທີ່ 1.181,30 ຈຸດ ຫຼຸດລົງ 5,03% ເມື່ອທຽບໃສ່ໄຕມາດຜ່ານມາ, ຕະຫຼອດໄຕມາດມີປະລິມານຊື້-ຂາຍຮຸ້ນທັງໝົດ 3,64 ລ້ານຮຸ້ນ ແລະ ມີມູນຄ່າການ ຊື້-ຂາຍ 19,74 ຕື້ກີບ ຫຼຸດລົງ 68,66% ທຽບໃສ່ໄຕມາດຜ່ານມາ. ໂດຍໄຕມາດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 80,92% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 5.529 ກີບ ຫຼຸດລົງ 392 ກີບ ເມື່ອທຽບໃສ່ໄຕມາດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 731.325 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 4 ຕື້ກີບ ຫຼຸດລົງ 21,60% ເມື່ອທຽບໃສ່ໄຕມາດຜ່ານມາ. ໂດຍໄຕມາດນີ້ ຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 59.85% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,75%[1].

ຮຸ້ນຂອງບໍລິສັດຜະລິດໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 6.207 ກີບ ຫຼຸດລົງ 429 ກີບ ເມື່ອທຽບໃສ່ໄຕມາດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 2,12 ລ້ານຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 13,19 ຕື້ກີບ ຫຼຸດລົງ 77,01% ເມື່ອທຽບໃສ່ໄຕມາດຜ່ານມາ. ໂດຍເປັນການຊື້-ຂາຍຂອງ ຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 60,90% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 13,83%[2].

ຮຸ້ນຂອງບໍລິສັດລາວເວີນ ມະຫາຊົນ (LWPC) ມີລາຄາຊື້-ຂາຍສະເລ່ຍ 7.748 ກີບ ຫຼຸດລົງ 121 ກີບ ເມື່ອທຽບໃສ່ໄຕມາດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 28.055 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 217,37 ລ້ານກີບ ເພີ່ມຂຶ້ນ 619,21% ເມື່ອທຽບໃສ່ໄຕມາດຜ່ານມາ. ໂດຍເປັນການຊື້-ຂາຍຂອງ ຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 34,68% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ LWPC ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,77%[3].

ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍສະເລ່ຍ 2.865 ກີບ ຫຼຸດລົງ 111 ກີບ ເມື່ອທຽບໃສ່ໄຕມາດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 446.882 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1.280 ລ້ານກີບ ເພີ່ມຂຶ້ນ 203,84% ເມື່ອທຽບໃສ່ໄຕມາດຜ່ານມາ. ໂດຍເປັນການຊື້-ຂາຍຂອງ ຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 51.87% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,69%[4].

ຮຸ້ນຂອງບໍລິສັດ ສຸວັນນີໂຮມເຊັນເຕີ ມະຫາຊົນ (SVN) ເຂົ້າຊື້-ຂາຍໃນຕະຫຼາດຫຼັກຊັບລາວເປັນໄຕມາດທຳອິດ ໂດຍເລີ່ມຊື້-ຂາຍມື້ທຳອິດແມ່ນວັນທີ 11 ທັນວາ 2015 ມີລາຄາຊື້-ຂາຍສະເລ່ຍ 3.260 ກີບ, ມີປະລິມານຊື້-ຂາຍທັງໝົດ 309.600 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1 ຕື້ກີບ. ໂດຍເປັນການຊື້-ຂາຍຂອງ ຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 31,36% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ SVN ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 41,%[5].

**(ຮອງ) ຫົວໜ້າພະແນກຄຸ້ມຄອງຕະຫຼາດຫຼັກຊັບ**

ທ. ບຸນຈິງ ກອງຄຳ

[1] ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%;

[2] ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 20%;

[3] ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ;

[4] ສັດສ່ວນຖືຄອງຮຸ້ນ PTL ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ.

[5] ສັດສ່ວນຖືຄອງຮຸ້ນ SVN ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ.

## ຕາຕະລາງ1: ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)

| | ໄຕມາດ 3 | | ໄຕມາດ 4 | | % ການປ່ຽນແປງ | |
|---|---|---|---|---|---|---|
| | ຈຳນວນ(ລ້ານຮຸ້ນ) | ມູນຄ່າການຊື້ຂາຍ (ຕື້ກີບ) | ຈຳນວນ(ລ້ານຮຸ້ນ) | ມູນຄ່າການຊື້ຂາຍ (ຕື້ກີບ) | ຈຳນວນ | ມູນຄ່າການຊື້ຂາຍ |
| BCEL | 870,969 | 5,157,277,900 | 731,325 | 4,043,467,500 | - 16.03 | - 21.60 |
| EDL-GEN | 8,644,625 | 57,364,137,200 | 2,125,186 | 13,190,537,800 | - 75.42 | - 77.01 |
| LWPC | 3,841 | 30,223,900 | 28,055 | 217,373,800 | 630.41 | 619.21 |
| PTL | 141,612 | 421,437,450 | 446,882 | 1,280,492,100 | 215.57 | 203.84 |
| SVC | | | 309,500 | 1,009,050,000 | | |
| ທັງໝົດ | 9,661,047 | 62,973,076,450 | 3,640,948 | 19,740,921,200 | - 62.31 | - 68.65 |

## ແຜນວາດ1: ດັດຊະນີຕະຫຼາດຫຼັກຊັບລາວ

(ວັນທີ 11 ມັງກອນ - 22 ທັນວາ 2015)




## ແຜນວາດ2: ມູນຄ່າການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບລາວ

(ເດືອນ ຕຸລາ - ທັນວາ 2015)

ຫົວໜ່ວຍ: ລ້ານກີບ



ຕາຕະລາງ 2: ດັດຊະນີຕະຫຼາດຫຼັກຊັບຕ່າງປະເທດ

| ຊື່ດັດຊະນີ | ປະເທດ | ດັດຊະນີໃຕມາດນີ້ | ດັດຊະນີໃຕມາດທີ່ຜ່ານມາ | +/- | % |
|---|---|---|---|---|---|
| I. ສະຫະລັດ | | | | | |
| DOW | | 17.251,62 | 16.510,19 | 741,43 | 4,49 |
| NASDAQ | | 4.968,92 | 4.828,95 | 139,97 | 2,9 |
| S&P500 | | 2.021,15 | 1.966,97 | 54,18 | 2,75 |
| II. ຕະຫຼາດຫຼັກຊັບເອີຣົບ | | | | | |
| Eurofirst 300 | ເອີຣົບ | 1.401,94 | 1.411,37 | -9,43 | -0,67 |
| DAX | ເຢຍລະມັນ | 10.497,77 | 9.948,51 | 549,26 | 5,52 |
| FTSE100 | ອັງກິດ | 6.034,84 | 6.108,71 | -73,87 | -1,21 |
| CAC40 | ຝຣັ່ງ | 4.565,17 | 4.585,50 | -20,33 | -0,44 |
| LUXXX | ລຸກຊໍາບວກ | 1.347,066 | 1.426,54 | -79,478 | -5,57 |
| III. ຕະຫຼາດຫຼັກຊັບອາຊີ | | | | | |
| NIKKEI225 | ຍີ່ປຸ່ນ | 18.916,02 | 18.070,21 | 845,81 | 4,68 |
| KOSPI | ເກົາຫຼີໃຕ້ | 1.981,19 | 1.964,68 | 16,51 | 0,84 |
| HANG SENG | ຮ່ອງກົງ | 21.791,68 | 21.756,93 | 34,75 | 0,16 |
| TWSE | ໄຕ້ຫວັນ | 8.282,17 | 8.307,04 | -24,87 | -0,3 |
| SHANG HAI | ສປ. ຈີນ | 3.642,47 | 3.156,54 | 485,93 | 15,39 |
| Shenzhen | ສປ. ຈີນ | 2.357,989 | 1.738,64 | 619,349 | 35,62 |
| S&P/ASX200 | ອົດສະຕາລີ | 5.109,00 | 5.066,24 | 42,8 | 0,84 |
| IV. ຕະຫຼາດຫຼັກຊັບອາຊຽນ | | | | | |
| ASEAN 40 | ອາຊຽນ | 8.281,76 | 8.386,94 | -82,18 | -0,98 |
| STRAIT TIMES | ສິງກະໂປ | 2.845,55 | 2.882,27 | -36,72 | -1,27 |
| SET | ໄທ | 1.264,44 | 1.392,73 | -128,29 | -9,21 |
| FBMLCI | ມາເລເຊຍ | 1.629,09 | 1.639,47 | -10,38 | -0,63 |
| JCI | ອິນໂດເນເຊຍ | 4.490,68 | 4.376,08 | 114,6 | 2,62 |
| PCOMP | ຟິລິບປິນ | 6.910,34 | 7.092,41 | -182,07 | -2,57 |
| HOCHIMIN | ສສ. ຫວຽດນາມ | 566,9 | 572,12 | -5,22 | -0,91 |
| HANOI | ສສ. ຫວຽດນາມ | 78,72 | 78,07 | 0,65 | 0,83 |
| CSX | ກໍາປູເຈຍ | 396,01 | 421,47 | -25,46 | -6 |
| LSX | ລາວ | 1.181,3 | 1,212,72 | -31,44 | -2,59 |
| V. ດັດຊະນີກຸ່ມທະນາຄານ | | | | | |
| NASDAQBANK | ສະຫະລັດ | 2.837,52 | 2.742,59 | 94,93 | 3,46 |
| SET BANK | ໄທ | 424,6 | 473,25 | -48,65 | -10,28 |